ກໍາລັງທັບເສລີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສລີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສລີປະຊາທິປະໄຕລາວ.**

**ເລກທີ ໔໗໗/ປພຖຂ/໐໖໖໑໑໐**

# ບົດຄວາມ

## ຜົນສະທ້ອນຈາກການລົງທຶນທີ່ບໍ່ຄຸ້ມຄ່າ

ພັກຣັດ ໄດ້ປະເມີນການສ້າງສາພັດທະນາປະເທດ ຜ່ານລະຍະ 34ປີ ວ່າ ດີຫລາຍ ຈົນເຖິງຂັ້ນ ຂນານນາມ ວ່າ "*ເປັນຍຸກ ຊ້າງເຜືອກ ຫີນພູ ງູໃຫຍ່*", ໝາຍເຖິງ ມີການສ້າງສາພັດທະນາປະເທດ ດ້ວຍການຮຽກຮ້ອງ ໃຫ້ ຕ່າງຊາດເຂົ້າມາລົງທຶນ ທໍາທຸຣະກິຈຕ່າງໆ...ແຕ່ໃນຄວາມເປັນຈິງແລ້ວ, ມັນແມ່ນການຂາຍຊາດຂອງຕົນເອງ ໃນຣາຄາຖືກທີ່ສຸດ!. ຜົນສະທ້ອນຈາກການໃຫ້ຕ່າງຊາດ ເຂົ້າມາລົງທຶນ ໂດຍທີ່ພັກຣັດ ບໍ່ມີຄວາມສາມາດ ຄວບຄຸມໄດ້ນັ້ນ, ມັນສົ່ງຜົນສະທ້ອນ ອັນໃຫຍ່ຫລວງ ໃຫ້ແກ່ປະຊາຊົນ ໃນການສ້າງສາທໍາມາຫາກິນ.

ການສ້າງເຂື່ອນໄຟຟ້າ, ການໃຫ້ສັມປະທານທີ່ດິນ ປູກຕົ້ນໄມ້ອຸດສາຫະກໍາ, ການສ້າງເຂດ ເສຖກິດພິເສດ, ສ້າງກາສິໂນ, ສ້າງສນາມກ໊ອບຕ່າງໆເຫລົ່ານີ້, ລ້ວນແຕ່ນໍາຄວາມເດືອດຮ້ອນ ມາໃຫ້ປະຊາຊົນເທົ່ານັ້ນ. ເພາະຜົນທີ່ໄດ້ຮັບນັ້ນ ມັນຕຣົງກັນຂ້າມກັບ ຄໍາໂຄສະນາຊວນເຊື່ອ ຂອງພັກຣັດ ວ່າ"ຈະເຮັດໃຫ້ປະຊາຊົນ ມີວຽກເຮັດງານທໍາ, ມີຣາຍໄດ້ທີ່ດີຂຶ້ນຕື່ມ". -ການສ້າງເຂື່ອນ ຢ່າງຫລວງຫລາຍຢູ່ໃນລາວ ມັນບໍ່ພຽງແຕ່ ທໍາລາຍຣະບົບ ຊີວະຊາດ, ທໍາລາຍປ່າໄມ້ເທົ່ານັ້ນ, ມັນຍັງໄດ້ສ້າງຄວາມເດືອດຮ້ອນ ໃຫ້ແກ່ປະຊາຊົນຫລາຍແສນຄົນ ທີ່ຖືກບັງຄັບ ໃຫ້ຍົກຍ້າຍ ຈາກບໍຣິເວນສ້າງເຂື່ອນ ໂດຍທີ່ພັກຣັດບໍ່ໄດ້ໃຊ້ຈ່າຍຄ່າຕອບແທນເທົ່າທີ່ຄວນ. ພລັງງານໄຟຟ້າທີ່ຜລິດ ໄດ້ 1,983,383,000kw/h. ຂາຍໄດ້ 53,530,000 ດອນລາສະຫະຣັດ ແລະ 1,181,790,000 ບາດ. ແຕ່ ຣັຖບານລາວ ໄດ້ 8,350,000 ດອນລາສະຫະຣັດ. ມັນເປັນການລົງທຶນທີ່ບໍ່ຄຸ້ມຄ່າຈັກດີ້!.

ຈະແມ່ນດ້ານການ ໃຫ້ສຳປະທານທີ່ດິນປູກຕົ້ນໄມ້ ອຸດສາຫະກຳ ກໍ່ເຊັ່ນດຽວ. ຣາຄາໃຫ້ເຊົ່າ ກໍມີແຕ່ 3 ເຖິງ 9 ດອນລາ ຕໍ່ປີ; -ຈີນນັກຂ່າວຕ່າງປະເທດ ລົງຂ່າວວ່າ "ປານໄດ້ດິນລ້າໆ". ປະຊາຊົນລາວໂດຍທົ່ວໄປ ມີອາຊີບ ເປັນຊາວກະສິກອນ ຖືເອົາທີ່ດິນ ເປັນບ່ອນສ້າງສາທຳມາຫາກິນແລະຮັກສາໄວ້ເປັນມູນມໍຣະດົກຕົກທອດ ໄປຮອດຊົ່ວລູກຊົ່ວຫລານ. ໃນເມື່ອຂາຍໃຫ້ຕ່າງປະເທດໄປແລ້ວ 50 ປີ ຫລື 75 ປີ, ພວກລູກຫລານ ຈະເອົາດິນຢູ່ໃສ ມາສ້າງຢູ່ທຳກິນ?. ການໃຫ້ສຳປະທານທີ່ດິນຢ່າງຫລວງຫລາຍດັ່ງນີ້, ປ່າໄມ້ ທີ່ດິກໜາໃນເຂດ ສຳປະທານ ແລະບວກນ້ຳວັງປາ ທີ່ເປັນບ່ອນຊອກຢູ່ຫາກິນ ຂອງປະຊາຊົນ, ເຈົ້າຂອງບໍຣິສັທ ກໍເອົາໄປ ເປັນຂອງ ພວກເຂົາໝົດ. ສິ່ງເຫລົ່ານີ້, ລ້ວນແລ້ວແຕ່ສ້າງຄວາມເດືອດຮ້ອນມາໃຫ້ປະຊາຊົນທັງນັ້ນ!.

ການຂຸດຄົ້ນບໍ່ແຮ່ໂລຫະ, ການສ້າງໂຮງງານຕ່າງໆ ກໍບໍ່ປະຕິບັດ ຕາມມາຕຖານສາກົນ, ປ່ອຍນ້ຳເປິເປື້ອນ ສິ່ງກິ່ນເໝັນ, ເກີດມູລພິດທຳລາຍສະພາບແວດລ້ອມ ໂດຍທີ່ບໍ່ໄດ້ຄຳນຶງເຖິງ ສຸຂພາບອະນາມັຍ ຂອງປະຊາຊົນ.

-ການສ້າງເຂດເສຖກິດພິເສດ, ສ້າງກາສິໂນ ໃນແຂວງຫລວງນ້ຳທາ ປະຈຸບັນນີ້, ພຍາດ HIV/AIDS ກໍກຳລັງແຜ່ລະບາດຂຶ້ນຢ່າງຫລວງຫລາຍ. ມີກັມກອນເພດຊາຍ ຕິດໂຣຄເອດນີ້ ເຖິງ 60%. ຜູ້ຍິງ 38% ແລະເດັກນ້ອຍ ຊຶ່ງຕິດຈາກແມ່, ຍ້ອນພໍ່ ມັກໄປຫລິ້ນ ກັບຜູ້ຍິງບໍຣິການທາງເພດ. ໃນເຂດຊາຍແດນ ລາວ-ຈີນ, ຜູ້ຕິດເຊື້ອ HIV/AIDS ເພີ້ມຂຶ້ນຈາກ 6 ຄົນໃນປີ 2006 ມາເປັນ 28ຄົນ ໃນປີ 2009. ຢູ່ແຂວງຈຳປະສັກ ກໍເຊັ່ນດຽວ. ໂຣຄເອດ, ໄດ້ແຜ່ລະບາດຂຶ້ນຢ່າງຫລວງຫລາຍ. ສິ່ງເຫລົ່ານີ້, ກໍໜ້າວິຕົກ ແລະເປັນຫ່ວງນຳປະຊາຊົນລາວ ທີ່ຍັງບໍ່ທັນມີຄວາມຮູ້ ໃນການປ້ອງກັນພຍາດນີ້.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ ເຫັນວ່າ "ການໃຫ້ ບໍຣິສັທຕ່າງຊາດເຂົ້າມາລົງທຶນທຳທຸຣະກິຈ ຢ່າງບໍ່ມີຣະບຽບຫລັກການ ຄວບຄຸມບໍຣິຫານ ໃຫ້ໄດ້ ຢ່າງ ຖືກຕ້ອງ ຕາມຫລັກການສາກົນແລ້ວ, ກໍຈະມີແຕ່ນຳພາປະເທດຊາດ ເຂົ້າສູ່ຄວາມຫາຍຍະນະ ເກີດວິກິດການ ຮອບດ້ານເທົ່ານັ້ນເອງ. ພັກຣັດ ບໍ່ສາມາດ ແກ້ໄຂບັນຫານີ້ໄດ້, ຍ້ອນວ່າແມ່ນລູກຫລານ ຈຸ້ມເຈື້ອ ວົງຕະກຸນຂອງພັກຣັດ ຜູ້ມີອຳນາດ ອິດທິພົນ ໄປຮ່ວມຫຸ້ນສ່ວນ ທຳທຸຣະກິດແລະຈັດຕັ້ງ ບໍຣິສັທຮອງຮັບເອົາ ການຊ່ວຍເຫລືອ ຕ່າງໆໂດຍທີ່ຕົນເອງ ບໍ່ມີຄວາມຮູ້ຄວາມສາມາດ ຈະຄວບຄຸມບໍຣະຫານກິຈການນັ້ນໆໄດ້. ມີພຽງແຕ່ ຫວັງຜົນກຳໄຣເທົ້ານັ້ນເອງ! ຈຶ່ງມີຜົນສະທ້ອນ ແນວບໍ່ດີ ມາສູ່ການດຳຣົງຊີວິດ ຂອງປະຊາຊົນ ຢ່າງຮ້າຍແຮງ.

**ບັນຫາຕ່າງໆ ທີ່ມີຢູ່ໃນປະຈຸບັນນີ້, ພັກຣັດ ບໍ່ສາມາດແກ້ໄຂໄດ້ ຕາບໃດທີ່ຍັງບໍ່ແກ້ຕົ້ນຕໍຂອງບັນຫາ ກໍຄື ການປ່ຽນຣັຖບານນັ້ນເອງ.**

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໓໑ ມີນາ ໒໐໑໐.**